ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເລກທີ 978 /ກຕສ

ນະຄອນຫຼວງວຽງຈັນ, ວັນທີ 02 ເມສາ 2026

# ຂໍ້ຕົກລົງ
## ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ

- ອີງຕາມກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ, ເລກທີ 05/ສພຊ, ວັນທີ 16 ພະຈິກ 2021;
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ເລກທີ 625/ນຍ, ວັນທີ 22 ຕຸລາ 2021;
- ອີງຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີ ການສະກັດກັ້ນ ແລະ ແກ້ໄຂອາຊະຍາກຳທາງດ້ານ ອິນເຕີເນັດ ແລະ ການພະນັນອອນລາຍ, ເລກທີ 032/ນຍ, ລົງວັນທີ 12 ທັນວາ 2025;
- ອີງຕາມໜັງສືສະເໜີ ຂອງອົງການຄຸ້ມຄອງໂທລະຄົມມະນາຄົມ, ເລກທີ 309/ອຄທ, ວັນທີ 23 ມີນາ 2026.

ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ແລະ ວິທີການ ກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບ ຂອງຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອເກັບກຳຂໍ້ມູນຂອງຜູ້ໃຊ້ເລກໝາຍໂທລະສັບ ກ່ອນການເປີດນຳໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຂົ້າໃນລະບົບຖານຂໍ້ມູນ ໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ. ແນໃສ່ໃຫ້ເປັນຂໍ້ມູນພື້ນຖານໃນການສ້າງເລກລະຫັດດີຈີຕອນ, ຮອງຮັບການນຳໃຊ້ເລກໝາຍໂທລະສັບ ເຂົ້າໃນລະບົບເຕັກໂນໂລຊີດີຈີຕອນ, ຮັບປະກັນໄດ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ.

**ມາດຕາ 2 ການຂຶ້ນທະບຽນເລກໝາຍໂທລະສັບ**

ການຂຶ້ນທະບຽນເລກໝາຍໂທລະສັບ ແມ່ນ ການບັນທຶກຂໍ້ມູນຂອງຜູ້ນຳໃຊ້ເລກໝາຍໂທລະສັບ ທັງທີ່ເປັນແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ທັງທີ່ນຳໃຊ້ຊິມກາດ ໃນຮູບແບບສາມາດຈັບຕ້ອງໄດ້ ແລະ ຮູບແບບເອເລັກໂຕນິກ ຫຼື e-SIM.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ອຸປະກອນສັບພະສິ່ງ (Internet of Thing-IoT) ໝາຍເຖິງ ອຸປະກອນ IoT ທີ່ນຳໃຊ້ເລກໝາຍໂທລະສັບໃນການເຊື່ອມຕໍ່ ແລະ ນຳໃຊ້ ອິນເຕີເນັດ;

2. ຊິມຄາດ ໝາຍເຖິງ Smart Chip ຂະໜາດນ້ອຍ ທີ່ບັນທຶກຂໍ້ມູນເລກໝາຍປະຈຳຕົວຜູ້ໃຊ້ໂທລະສັບມືຖືລະຫວ່າງປະເທດ (IMSI) ເພື່ອໃຊ້ເຊື່ອມຕໍ່ອຸປະກອນ ມືຖື ຫຼື IoT ເຂົ້າກັບເຄືອຂ່າຍໂທລະສັບມືຖື, ມີທັງຮູບແບບສາມາດຈັບຕ້ອງໄດ້ ແລະ ຮູບແບບເອເລັກໂຕນິກ (E-SIM) ທີ່ຝັງຢູ່ໃນແຜ່ນບອດ ມືຖື ຫຼື ອຸປະກອນ IoT;
3. ໝາຍເລກປະຈຳຕົວຜູ້ໃຊ້ໂທລະສັບມືຖືລະຫວ່າງປະເທດ (International Mobile Subscriber Identity -IMSI) ຫຼື ລະຫັດ IMSI ໝາຍເຖິງ ເລກໝາຍຕາມຂໍ້ກຳນົດ E.212 ຂອງອົງການສະຫະພາບໂທລະຄົມສາກົນ(ITU) ຊຶ່ງເປັນເລກໝາຍທີ່ກຳນົດໃນຊິມຄາດ ເພື່ອລະບຸຕົວຕົນຜູ້ໃຊ້ເລກໝາຍໂທລະສັບມືຖື ໃນແຕ່ລະເຄືອຂ່າຍໂທລະສັບມືຖື ແລະ ໃຊ້ບໍລິການໂຣມມິ່ງຂ້າມເຄືອຂ່າຍ.

**ມາດຕາ 4 ຫຼັກການໃນການຂຶ້ນທະບຽນເລກໝາຍໂທລະສັບ**

ການຂຶ້ນທະບຽນເລກໝາຍໂທລະສັບໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ໂປ່ງໃສ ໃນການເກັບກຳຂໍ້ມູນຂອງຜູ້ນຳໃຊ້ເລກໝາຍໂທລະສັບ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ສຳເລັດ;
2. ຮັບປະກັນ ການສະໜອງຂໍ້ມູນ ໃຫ້ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຫັນເປັນດິຈິຕອນ;
3. ຮັບປະກັນ ໃຫ້ທຸກເລກໝາຍໂທລະສັບ ຕ້ອງໄດ້ຮັບການຂຶ້ນທະບຽນເລກໝາຍໂທລະສັບ ຜ່ານລະບົບທີ່ ກະຊວງ ເຕັກໂນໂລຊີ ແລະ ສື່ສານ ກຳນົດໃຫ້ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ກ່ອນຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເປີດໃຫ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂອງຕົນໄດ້;
4. ຮັບປະກັນ ການຄຸ້ມຄອງຖານຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ມີຄວາມປອດໄພ ແລະ ເກັບຮັກສາຂໍ້ມູນເປັນຄວາມລັບ ໄວ້ໃນຖານຂໍ້ມູນຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ສະເພາະຂໍ້ມູນຂອງລູກຄ້າຕົນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ ແລະ ນິຕິບຸກຄົນ ນຳໃຊ້ເລກໝາຍໂທລະສັບ ແລະ ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂອງ ສປປ ລາວ.

## ໝວດທີ 2
## ການຂຶ້ນທະບຽນເລກໝາຍໂທລະສັບ

**ມາດຕາ 6 ການຂຶ້ນທະບຽນເລກໝາຍໂທລະສັບ ເພື່ອນຳໃຊ້**

ບຸກຄົນທີ່ຕ້ອງການນຳໃຊ້ເລກໝາຍໂທລະສັບ ຕ້ອງມີອາຍຸກະສຽນ 15ປີ ຂຶ້ນໄປ, ຖ້າອາຍຸບໍ່ຮອດກະສຽນ ແມ່ນໃຫ້ຜູ້ປົກຄອງຂຶ້ນທະບຽນແທນຕົນເອງ.

ບຸກຄົນໜຶ່ງ ສາມາດຂຶ້ນທະບຽນເລກໝາຍໂທລະສັບລວມທຸກຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ສູງສຸດໄດ້ ບໍ່ເກີນ 5 ເລກໝາຍ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີພັນທະໃນການເກັບກຳຂໍ້ມູນຂອງຜູ້ນຳໃຊ້ເລກໝາຍໂທລະສັບ ເພື່ອຂຶ້ນທະບຽນໃຫ້ຄົບຖ້ວນ, ຖືກຕ້ອງ, ຊັດເຈນ ແລະ ສາມາດກວດສອບໄດ້ ກ່ອນເປີດໃຫ້ນຳໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໂດຍເກັບກຳຂໍ້ມູນດັ່ງນີ້:

1. ຊື່ ແລະ ນາມສະກຸນ;

2. ເລກໝາຍໂທລະສັບ;
3. ປະເພດບໍລິການ;
4. ເພດ;
5. ສັນຊາດ;
6. ປະເພດເອກະສານຢັ້ງຢືນຕົວຕົນ
7. ອາຊີບ;
8. ວັນເດືອນປີເກີດ;
9. ອາຍຸ;
10. ທີ່ຢູ່ປະຈຸບັນ: ບ້ານ, ຕາແສງ ເມືອງ, ແຂວງ, ນະຄອນຫຼວງວຽງຈັນ
11. ທີ່ເກີດ: ບ້ານ, ຕາແສງ ເມືອງ, ແຂວງ, ນະຄອນຫຼວງວຽງຈັນ (ຖ້າມີ);
12. ຈຸດພິກັດການຂຶ້ນທະບຽນເລກໝາຍໂທລະສັບ;
13. ວັນເດືອນປີຂຶ້ນທະບຽນເລກໝາຍໂທລະສັບ;
14. ວັນເດືອນປີອອກເອກະສານຢັ້ງຢືນຕົວຕົນ;
15. ວັນເດືອນປີໝົດອາຍຸຂອງເອກະສານຢັ້ງຢືນຕົວຕົນ;
16. ຮູບຖ່າຍຕົວຈິງຂອງຜູ້ມາຂຶ້ນທະບຽນເລກໝາຍໂທລະສັບ ຄູ່ກັບເອກະສານຢັ້ງຢືນຕົວຕົນທີ່ນຳໃຊ້ ໃນເວລາມາຂຶ້ນທະບຽນເລກໝາຍໂທລະສັບ;
17. ຮູບຖ່າຍຕົວຈິງຂອງຜູ້ມາຂຶ້ນທະບຽນເລກໝາຍໂທລະສັບ ເພື່ອຢັ້ງຢືນຕົວຕົນ ຕາມທີ່ກຳນົດໄວ້ໃນລະບົບຂຶ້ນທະບຽນເລກໝາຍໂທລະສັບ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
18. ຮູບຖ່າຍເອກະສານຢັ້ງຢືນຕົວຕົນໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 01 ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
19. ຂໍ້ມູນອື່ນໆ ຕາມການກຳນົດຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

ສຳລັບນິຕິບຸກຄົນ ທີ່ມີຄວາມຕ້ອງການນຳໃຊ້ເລກໝາຍໂທລະສັບໃນນາມນິຕິບຸກຄົນ ແມ່ນໃຫ້ສະເໜີຫາ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເພື່ອພິຈາລະນາເປັນແຕ່ລະກໍລະນີ. ພາຍຫຼັງໄດ້ຮັບອະນຸຍາດ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຈະອອກແຈ້ງການຫາຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອຂຶ້ນທະບຽນເລກໝາຍໂທລະສັບໃນນາມນິຕິບຸກຄົນໃຫ້ສຳເລັດ ກ່ອນການເປີດນຳໃຊ້ບໍລິການ.

**ມາດຕາ 7 ເອກະສານ ການຂຶ້ນທະບຽນເລກໝາຍໂທລະສັບ**

ເອກະສານ ທີ່ສາມາດນຳໃຊ້ຢັ້ງຢືນຕົວຕົນ ເພື່ອຂຶ້ນທະບຽນເລກໝາຍໂທລະສັບ ມີດັ່ງນີ້:

1. ບັດປະຈຳຕົວ;
2. ສຳມະໂນຄົວ (ສະເພາະບຸກຄົນ);
3. ໜັງສືຜ່ານແດນ (Passport);
4. ບັດປະຈຳຕົວຕ່າງດ້າວ;
5. ສຳມະໂນຄົວຕ່າງດ້າວ (ສະເພາະບຸກຄົນ).

ການຂຶ້ນທະບຽນເລກໝາຍໂທລະສັບ ຕ້ອງໄດ້ຖືເອກະສານຢັ້ງຢືນຕົວຕົນສະບັບແທ້ມານຳທຸກຄັ້ງ ເພື່ອນຳໃຊ້ເປັນຂໍ້ມູນຢັ້ງຢືນຕົວຕົນ ໂດຍມອບໃຫ້ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ສຳເນົາສີເອກະສານດັ່ງກ່າວເຂົ້າລະບົບຖານຂໍ້ມູນ.

**ມາດຕາ 8 ການກວດກາຜົນຂອງການຂຶ້ນທະບຽນເລກໝາຍໂທລະສັບ**

ການກວດກາຜົນຂອງການຂຶ້ນທະບຽນເລກໝາຍໂທລະສັບ ດ້ວຍຮູບແບບດັ່ງນີ້:

1. ຜ່ານລະບົບ ຢູເອັສເອັສດີ (USSD) ດ້ວຍລະຫັດ *1021# ;
2. ຜ່ານຊ່ອງທາງການບໍລິການຕ່າງໆ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເປັນຕົ້ນ ເວັບໄຊ໌ ຫຼື ສາຍດ່ວນ.

ການແຈ້ງຜົນການຂຶ້ນທະບຽນເລກໝາຍໂທລະສັບ ຜ່ານແຕ່ລະຮູບແບບ, ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງຮັບປະກັນຄວາມລັບຂອງຂໍ້ມູນຜູ້ໃຊ້ເລກໝາຍໂທລະສັບ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 9 ການບໍລິການສຳລັບນັກທ່ອງທ່ຽວ.**

ການບໍລິການສຳລັບນັກທ່ອງທ່ຽວ ແມ່ນການຈຳໜ່າຍຊິມກາດ ໃຫ້ສະເພາະນັກທ່ອງທ່ຽວທີ່ເດີນທາງເຂົ້າມາໃນ ສປປ ລາວ ຜ່ານດ່ານສາກົນເທົ່ານັ້ນ, ຫ້າມບໍ່ໃຫ້ມີການຈຳໜ່າຍໃນຈຸດບໍລິການຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ບໍ່ຢູ່ໃນດ່ານສາກົນ ແລະ ມີອາຍຸການນຳໃຊ້ສູງສຸດບໍ່ເກີນ 30 ວັນ ນັບແຕ່ວັນທີເປີດນຳໃຊ້.

ຊິມກາດສຳລັບນັກທ່ອງທ່ຽວ ແມ່ນໃຫ້ນຳໃຊ້ໄດ້ສະເພາະບໍລິການອິນເຕີເນັດເທົ່ານັ້ນ, ບໍ່ອະນຸຍາດ ໃຫ້ນຳໃຊ້ບໍລິການ ໂທເຂົ້າ-ອອກ, ຮັບ-ສົ່ງ ຂໍ້ຄວາມສັ້ນ, ບໍ່ໃຫ້ສະແດງເລກໝາຍໂທລະສັບ ແລະ ບໍ່ໃຫ້ມີວິທີການໃດໆທີ່ສາມາດກວດເບິ່ງເລກໝາຍໂທລະສັບຂອງຊິມກາດດັ່ງກ່າວໄດ້ໂດຍເດັດຂາດ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງລາຍງານຂໍ້ມູນລະອຽດຂອງເລກໝາຍໂທລະສັບທີ່ໃຊ້ຄູ່ກັບໝາຍເລກ IMSI ທີ່ສ້າງເປັນຊິມກາດສຳລັບນັກທ່ອງທ່ຽວ ໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ຮັບຊາບກ່ອນ ຈຶ່ງສາມາດຈຳໜ່າຍຊິມກາດດັ່ງກ່າວໄດ້.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີພັນທະຕ້ອງລາຍງານ ໃຫ້ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງວຽງຈັນ ຮັບຊາບ ເປັນປະຈຳໃນແຕ່ລະເດືອນ ກ່ຽວກັບຈຳນວນຊິມກາດທີ່ເອົາໄປວາງຈຳໜ່າຍ, ຈຳນວນຊິມກາດທີ່ໄດ້ຈຳໜ່າຍແລ້ວ, ຈຳນວນຊິມກາດທີ່ຍັງບໍ່ທັນໄດ້ຈຳໜ່າຍ ແລະ ຂໍ້ມູນອື່ນໆຕາມການແຈ້ງຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີພັນທະໃນການເກັບກຳຂໍ້ມູນ ການນຳໃຊ້ຊິມກາດສຳລັບນັກທ່ອງທ່ຽວຄື:

1. ຊື່ ແລະ ນາມສະກຸນ;
2. ໝາຍເລກ IMSI;
3. ຮູບຖ່າຍ ໜັງສືເດີນທາງ (Passport).

**ມາດຕາ 10 ລະບົບຂຶ້ນທະບຽນເລກໝາຍໂທລະສັບ**

ລະບົບຂຶ້ນທະບຽນເລກໝາຍໂທລະສັບ ແມ່ນລະບົບອຳນວຍຄວາມສະດວກໃນການບັນທຶກ, ເກັບກຳຂໍ້ມູນ ຂອງຜູ້ໃຊ້ເລກໝາຍໂທລະສັບ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ພັດທະນາຂຶ້ນ ຫຼື ໄດ້ຮັບອະນຸຍາດໃຫ້ນຳໃຊ້ຈາກ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ສາມາດດຳເນີນການຂຶ້ນທະບຽນເລກໝາຍໂທລະສັບ ຜ່ານລະບົບຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ດັ່ງລາຍລະອຽດລຸ່ມນີ້:

1. HTTPS ://L2.SIMREGISTER.GOV.LA ເພື່ອກວດກາຄວາມຖືກຕ້ອງ ແລະ ອະນຸມັດຜົນການຂຶ້ນທະບຽນເລກໝາຍໂທລະສັບ;
2. HTTPS ://L3.SIMREGISTER.GOV.LA ເພື່ອການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ.

ໃນກໍລະນີ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ພັດທະນາລະບົບຂຶ້ນທະບຽນເລກໝາຍໂທລະສັບເປັນຂອງຕົນເອງ ຕ້ອງໄດ້ຮັບອະນຸຍາດຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ ກ່ອນການນຳໃຊ້ ແລະ ຕ້ອງໄດ້ປະຕິບັດຕາມເງື່ອນໄຂຂອງຂໍ້ຕົກລົງສະບັບນີ້ ໂດຍຂໍ້ມູນຂອງຜູ້ຂຶ້ນທະບຽນເລກໝາຍໂທລະສັບ ຕ້ອງໄດ້ສົ່ງເຂົ້າຫາ ແລະ ມີການອະນຸມັດຜ່ານ ລະບົບຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຈຶ່ງສາມາດເປີດໃຫ້ນຳໃຊ້ບໍລິການໄດ້.

## ໝວດທີ 3
## ຈຸດບໍລິການ

### ມາດຕາ 11 ຈຸດບໍລິການ

ຈຸດບໍລິການ ແມ່ນປ່ອງບໍລິການ ຫຼື ສູນບໍລິການ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອຈຳໜ່າຍເລກໝາຍໂທລະສັບ, ຈຳໜ່າຍຊິມກາດສຳລັບນັກທ່ອງທ່ຽວ ແລະ ຂຶ້ນທະບຽນເລກໝາຍໂທລະສັບ ຊຶ່ງໄດ້ຮັບສິດ ແລະ ຕ້ອງປະຕິບັດພັນທະ ເຊັ່ນດຽວກັນກັບ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ.

ນິຕິບຸກຄົນ ທີ່ບໍ່ໄດ້ຮັບອະນຸຍາດເປັນຈຸດບໍລິການ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຫ້າມຈຳໜ່າຍ ແລະ ຮັບຂຶ້ນທະບຽນ ເລກໝາຍໂທລະສັບໂດຍເດັດຂາດ.

### ມາດຕາ 12 ເງື່ອນໄຂຂອງຈຸດບໍລິການ

ເພື່ອໃຫ້ສາມາດ ຄຸ້ມຄອງ, ຕິດຕາມ ແລະ ກວດກາໄດ້, ກະຊວງເຕັກໂນໂລຊີ ແລະ ການສື່ສານ ກຳນົດເງື່ອນໄຂຈຸດບໍລິການ ເພື່ອໃຫ້ຜູ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ປະຕິບັດດັ່ງນີ້:

1. ມີຈຸດພິກັດສະຖານທີຕັ້ງທີ່ຊັດເຈນ;
2. ມີເລກລະຫັດປະຈຳຕົວຂອງຈຸດບໍລິການ ທີ່ອອກໂດຍຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
3. ມີປ້າຍແຈ້ງບອກເຖິງການຈຳໜ່າຍ ແລະ ຮັບຂຶ້ນທະບຽນເລກໝາຍໂທລະສັບ;
4. ມີພະນັກງານຮັບຜິດຊອບ ທີ່ໄດ້ຜ່ານການຝຶກອົບຮົມ ແລະ ມີໃບຢັ້ງຢືນການຝຶກອົບຮົມ ກ່ຽວກັບຂັ້ນຕອນ, ວິທີການຂຶ້ນທະບຽນເລກໝາຍໂທລະສັບ ຈາກຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
5. ມີອຸປະກອນຮອງຮັບ ການຂຶ້ນທະບຽນເລກໝາຍໂທລະສັບ;
6. ເງື່ອນໄຂອື່ນໆທີ່ຈຳເປັນ ສຳລັບການຂຶ້ນທະບຽນເລກໝາຍໂທລະສັບ.

# ໝວດທີ 4
## ສິດ ແລະ ພັນທະ

**ມາດຕາ 13 ສິດ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີສິດ ດັ່ງນີ້:

1. ຈຳໜ່າຍເລກໝາຍໂທລະສັບ ແລະ ຊິມກາດສຳລັບນັກທ່ອງທ່ຽວ ໂດຍສອດຄ່ອງກັບຂໍ້ຕົກລົງສະບັບນີ້;
2. ປິດການນຳໃຊ້ເລກໝາຍໂທລະສັບ ທີ່ບໍ່ປະຕິບັດຕາມເງື່ອນໄຂຂອງຂໍ້ຕົກລົງສະບັບນີ້;
3. ທວງຖາມຂໍ້ມູນເພີ່ມຕື່ມ ໃນກໍລະນີ ຂໍ້ມູນ ຫຼື ເອກະສານການຂຶ້ນທະບຽນເລກໝາຍໂທລະສັບ ບໍ່ຖືກຕ້ອງ ຫຼື ບໍ່ຊັດເຈນ;
4. ພັດທະນາລະບົບ ຂຶ້ນທະບຽນເລກໝາຍໂທລະສັບຂອງຕົນ ຕາມມາດເງື່ອນໄຂທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
5. ປັບປຸງສະຖານະການນຳໃຊ້ເລກໝາຍໂທລະສັບ ເພື່ອຂຶ້ນທະບຽນເລກໝາຍໂທລະສັບໃຫ້ຜູ້ໃຊ້ບໍລິການໃໝ່ ໃນກໍລະນີເລກໝາຍໂທລະສັບດັ່ງກ່າວບໍ່ມີຜູ້ຊົມໃຊ້ແລ້ວ.
6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 14 ພັນທະ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີພັນທະ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ຊຸກຍູ້ ແລະ ສົ່ງເສີມ ວຽກງານການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີຄວາມເຂົ້າໃຈ ແລະ ເຫັນໄດ້ຄວາມສຳຄັນຂອງການຂຶ້ນທະບຽນເລກໝາຍໂທລະສັບ;
2. ສ້າງຈຸດບໍລິການ ເພື່ອອຳນວຍຄວາມສະດວກໃນການຂຶ້ນທະບຽນເລກໝາຍໂທລະສັບ;
3. ຕ້ອງຮັບປະກັນການຂຶ້ນທະບຽນເລກໝາຍໂທລະສັບໃຫ້ຂໍ້ມູນ ຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ;
4. ທຸກເລກໝາຍໂທລະສັບ ຕ້ອງໄດ້ຂຶ້ນທະບຽນເລກໝາຍໂທລະສັບ ແລະ ອະນຸມັດຜ່ານລະບົບຂຶ້ນທະບຽນເລກໝາຍໂທລະສັບ ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ພັດທະນາຂຶ້ນຈຶ່ງສາມາດເປີດໃຫ້ນຳໃຊ້ບໍລິການໄດ້;
5. ຮັບຜິດຊອບຕໍ່ໜ້າກົດໝາຍໃນການເຄື່ອນໄຫວຂອງຈຸດບໍລິການ ທີ່ຈຳໜ່າຍ ແລະ ຂຶ້ນທະບຽນເລກໝາຍໂທລະສັບ ບໍ່ຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ບໍ່ສຳເລັດ;
6. ຕ້ອງຮັບປະກັນຄວາມປອດໄພ ໃນການເຊື່ອມຕໍ່ ແລະ ການນຳໃຊ້ຢ່າງມີປະສິດທິພາບ;
7. ຕ້ອງຮັບປະກັນ ການເກັບຮັກສາຖານຂໍ້ມູນຂຶ້ນທະບຽນເລກໝາຍໂທລະສັບຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ, ປອດໄພ ແລະ ປິດລັບ;
8. ສ້າງລະບົບເກັບກຳຂໍ້ມູນຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເປັນຂອງຕົນເອງ ແລະ ມີຖານຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບສຳຮອງ ໃນຮູບແບບເອເລັກໂຕຣນິກໃດໜຶ່ງ ຕາມເງື່ອນຂອງຂໍ້ຕົກລົງສະບັບນີ້;
9. ຝຶກອົບຮົມ ແລະ ແນະນຳຈຸດບໍລິການຂອງຕົນ ໃຫ້ຮູ້ວິທີການຂຶ້ນທະບຽນເລກໝາຍໂທລະສັບ;

10. ສະໜອງການເຊື່ອມຕໍ່ ຖານຂໍ້ມູນຂຶ້ນທະບຽນເລກໝາຍໂທລະສັບຂອງຕົນ ເຂົ້າກັບລະບົບຂຶ້ນທະບຽນເລກໝາຍໂທລະສັບຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ທີ່ມີການພັດທະນາ ແລະ ປັບປຸງ ໃນແຕ່ລະໄລຍະ;
11. ສົ່ງບົດສະຫຼຸບລາຍງານຜົນການຈຳໜ່າຍ, ການຂຶ້ນທະບຽນເລກໝາຍໂທລະສັບ ແລະ ການນຳໃຊ້ເລກໝາຍໂທລະສັບຢ່າງເປັນທາງການກ່ອນທຸກໆວັນທີ 15 ຂອງເດືອນຖັດໄປ, ປະຈຳໄຕມາດ, ປະຈຳຫົກເດືອນ ແລະ ປະຈຳປີ ໃຫ້ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
12. ເກັບຮັກສາຂໍ້ມູນ ການຂຶ້ນທະບຽນເລກໝາຍໂທລະສັບຂອງຜູ້ໃຊ້ບໍລິການເກົ່າ ໃນກໍລະນີມີການຍົກເລີກ ຫຼື ປ່ຽນແປງຜູ້ໃຊ້ບໍລິການ ຢ່າງໜ້ອຍ 02 ປີ;
13. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 15 ສິດ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີສິດ ດັ່ງນີ້:

1. ສະເໜີປ່ຽນແປງຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບຂອງຕົນ;
2. ໄດ້ຮັບການສະໜອງບໍລິການ ຢ່າງມີຄຸນນະພາບ, ສະດວກ, ວ່ອງໄວ, ຍຸຕິທຳ ແລະ ປອດໄພ;
3. ສາມາດຂໍນຳໃຊ້ຂໍ້ມູນສ່ວນຕົວຂອງເລກໝາຍຕົນ ແລະ ອະນຸຍາດໃຫ້ພາກສ່ວນອື່ນນຳໃຊ້ຂໍ້ມູນສ່ວນຕົວຂອງຕົນ ທີ່ໄດ້ຂຶ້ນທະບຽນເລກໝາຍໂທລະສັບສຳເລັດ ເພື່ອຈຸດປະສົງໃດໜຶ່ງ;
4. ມອບ ຫຼື ໂອນເລກໝາຍໂທລະສັບຂອງຕົນໃຫ້ຜູ້ອື່ນນຳໃຊ້ ໂດຍມີຂຶ້ນທະບຽນນຳໃຊ້ເລກໝາຍໂທລະສັບຄືນໃໝ່ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
5. ສາມາດຂໍເປີດນຳໃຊ້ເລກໝາຍໂທລະສັບທີ່ຖືກປິດຄືນໄດ້ ພາຍໃນ 90ວັນ ຫຼັງຈາກວັນທີທີ່ຖືກປິດ ໃນກໍລະນີທີ່ຂຶ້ນທະບຽນເລກໝາຍໂທລະສັບຢ່າງຖືກຕ້ອງ;
6. ຂໍຢຸດຕິການນຳໃຊ້ເລກໝາຍໂທລະສັບຂອງຕົນ ຕາມລະບຽບການຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ພັນທະ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີພັນທະ ດັ່ງນີ້:

1. ຕ້ອງຂຶ້ນທະບຽນເລກໝາຍໂທລະສັບ ກ່ອນເປີດນຳໃຊ້ ຢູ່ຈຸດບໍລິການທີ່ຖືກຕ້ອງຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
2. ປະຕິບັດພັນທະໃນການໃຊ້ບໍລິການ ຕາມເງື່ອນໄຂຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ລະບຽບການທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດ;
3. ປັບປຸງ ແລະ ເພີ່ມ ຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບຂອງຕົນ ໃຫ້ສອດຄ່ອງກັບລະບຽບການທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານກຳນົດໃນແຕ່ລະໄລຍະ;
4. ເມື່ອຢຸດນຳໃຊ້ເລກໝາຍໂທລະສັບ ຕ້ອງໄດ້ຍົກເລີກການຜູກເລກໝາຍດັ່ງກ່າວເຂົ້າໃນບັນດາແອັບພລິເຄຊັ່ນຕ່າງໆ ເປັນຕົ້ນແມ່ນ ບັນຊີທະນາຄານ, ອີເມວ, ບັນຊີສື່ສັງຄົມອອນລາຍ (ວອດແອັບ, ເຟສບຸກ, ຕິກຕ໋ອກ,...) ແລະ ບັນດາແອັບພິເຄຊັ່ນອື່ນໆ ທີ່ມີການຜູກເລກໝາຍໂທລະສັບກ່ອນເປີດນຳໃຊ້;

5. ຮັບຜິດຊອບຕໍ່ໜ້າກົດໝາຍຂອງເລກໝາຍໂທລະສັບ ທີ່ຂຶ້ນທະບຽນເລກໝາຍໂທລະສັບນຳໃຊ້ອອກຊື່ຕົນເອງ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 17 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ ແລະ ນິຕິບຸກຄົນ ມີພຶດຕິກຳ ດັ່ງນີ້:

1. ຈຳໜ່າຍເລກໝາຍໂທລະສັບໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳເຂົ້າເລກໝາຍໂທລະສັບຂອງຕ່າງປະເທດ ເພື່ອຈຳໜ່າຍໃນ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
3. ຮັບຂຶ້ນທະບຽນເລກໝາຍໂທລະສັບໃຫ້ ບຸກຄົນ ແລະ ນິຕິບຸກຄົນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ຂຶ້ນທະບຽນສຳເລັດແລ້ວ ນຳໄປໃຫ້ບຸກຄົນອື່ນ ທີ່ບໍ່ແມ່ນລູກຫຼານຂອງຕົນ ຫຼື ນຳໄປໃຫ້ນິຕິບຸກຄົນອື່ນນຳໃຊ້;
5. ຈຳໜ່າຍເລກໝາຍໂທລະສັບ ທີ່ຂຶ້ນທະບຽນເລກໝາຍໂທລະສັບສຳເລັດແລ້ວ;
6. ມີພຶດຕິກຳໃດໜຶ່ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບ ຫຼື ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 18 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ຈຸດບໍລິການ**

ຫ້າມຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີພຶດຕິກຳ ດັ່ງນີ້:

1. ເປີດນຳໃຊ້ເລກໝາຍໂທລະສັບ ແລະ ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໂດຍບໍ່ໄດ້ຂຶ້ນທະບຽນເລກໝາຍໂທລະສັບຢ່າງຖືກຕ້ອງ ແລະ ສຳເລັດ ຢ່າງເດັດຂາດ;
2. ເປີດໃຫ້ບໍລິການໂທອອກ,ໂທອອກເຂົ້າ, ຮັບ ແລະ ສົ່ງຂໍ້ຄວາມສັ້ນ ສຳລັບບໍລິການ ຊິມກາດສຳລັບນັກທ່ອງທ່ຽວ;
3. ນຳເຂົ້າເລກໝາຍໂທລະສັບຂອງຕ່າງປະເທດ ເພື່ອຈຳໜ່າຍໃນ ສປປ ລາວ;
4. ເປີດເຜີຍຂໍ້ມູນຂຶ້ນທະບຽນເລກໝາຍໂທລະສັບຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໂດຍທີ່ບໍ່ໄດ້ຮັບອະນຸຍາດ;
5. ມອບ ຫຼື ໂອນ ລະຫັດນຳໃຊ້ລະບົບຂຶ້ນທະບຽນເລກໝາຍໂທລະສັບໃຫ້ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
6. ຈຳໜ່າຍຊິມກາດ ສຳລັບນັກທ່ອງທ່ຽວ ນອກດ່ານສາກົນ;
7. ປັບປຸງ ແລະ ປ່ຽນແປງ ຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ.

**ມາດຕາ 19 ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ຫ້າມຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ເລກໝາຍໂທລະສັບ ໂດຍບໍ່ໄດ້ຂຶ້ນທະບຽນເລກໝາຍໂທລະສັບ;

2. ນຳໃຊ້ເລກໝາຍໂທລະສັບ ເພື່ອກໍ່ຄວາມວຸ້ນວາຍໃນສັງຄົມ ແລະ ສິ່ງຜົນກະທົບຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
3. ນຳໃຊ້ເລກໝາຍໂທລະສັບຂອງຕ່າງປະເທດໃນ ສປປ ລາວ, ຍົກເວັ້ນ ຄົນຕ່າງປະເທດ ທີ່ນຳໃຊ້ເລກໝາຍໂທລະສັບ ທີ່ເປີດນຳໃຊ້ບໍລິການໂທຂ້າມແດນອັດຕະໂນມັດ (International Roaming);
4. ມອບ ຫຼື ໂອນ ເລກໝາຍໂທລະສັບຂອງຕົນທີ່ຂຶ້ນທະບຽນເລກໝາຍໂທລະສັບແລ້ວ ໃຫ້ບຸກຄົນອື່ນ ຫຼື ນິຕິບຸກຄົນອື່ນ ໂດຍບໍ່ຂຶ້ນທະບຽນເລກໝາຍໂທລະສັບຄືນໃໝ່ ໃຫ້ຖືກຕ້ອງກັບຂໍ້ມູນຜູ້ນຳໃຊ້ຕົວຈິງ;
5. ບໍ່ໃຫ້ການຮ່ວມມື ໃນການປະຕິບັດວຽກງານຂຶ້ນທະບຽນເລກໝາຍໂທລະສັບ;
6. ຈຳໜ່າຍເລກໝາຍໂທລະສັບ ທີ່ຂຶ້ນທະບຽນເລກໝາຍໂທລະສັບສຳເລັດ;
7. ປອມແປງເອກະສານ ຫຼື ຂໍ້ມູນ ເພື່ອມາຂຶ້ນທະບຽນເລກໝາຍໂທລະສັບ.

## ໝວດທີ 6
## ອົງການຄຸ້ມຄອງ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບ

**ມາດຕາ 20 ອົງການຄຸ້ມຄອງການຂຶ້ນທະບຽນເລກໝາຍໂທລະສັບ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນອົງການຄຸ້ມຄອງ, ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂດຍປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຂຶ້ນທະບຽນເລກໝາຍໂທລະສັບ ຂອງ ສປປ ລາວ.

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມອບໃຫ້ ອົງການກົດສົມໂທລະຄົມມະນາຄົມ ເປັນເສນາທິການ, ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ຕິດຕາມ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບ ຂອງ ສປປ ລາວ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີ ສ້າງຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບ;
2. ຕິດຕາມ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບ ລວມທັງການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນເລກໝາຍໂທລະສັບໃນຂອບເຂດທົ່ວປະເທດ ເປັນແຕ່ລະໄລຍະ;
3. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຂຶ້ນທະບຽນເລກໝາຍໂທລະສັບ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ປະສານສົມທົບ, ແລກປ່ຽນ ແລະ ສະໜອງຂໍ້ມູນອັນຈຳເປັນ ໃນວຽກງານການຂຶ້ນທະບຽນເລກໝາຍໂທລະສັບ ທີ່ຕິດພັນກັບວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
5. ນຳໃຊ້ມາດຕະການຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການຂອງຂໍ້ຕົກລົງສະບັບນີ້ ເປັນຕົ້ນ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ນຳສົ່ງຂໍ້ມູນໃຫ້ພາກສ່ວນກ່ຽວຂ້ອງ ສືບຕໍ່ດຳເນີນຕາມຂະບວນການຍຸຕິທຳ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວ ວຽກງານການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ລັດຖະບານຮັບຊາບຢ່າງເປັນປົກກະຕິ;
7. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງອົງການດັດສົມໂທລະຄົມມະນາຄົມ**

ອົງການດັດສົມໂທລະຄົມມະນາຄົມ ມີ ສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າຈັດຕັ້ງປະຕິບັດ ແລະ ເຜີຍແຜ່ວິໄສທັດ, ຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳກ່ຽວກັບ ການຂຶ້ນທະບຽນເລກໝາຍໂທລະສັບ;
2. ຕິດຕາມ, ກວດກາ ແລະ ຊຸກຍູ້ ວຽກງານຂຶ້ນທະບຽນເລກໝາຍໂທລະສັບ ຢ່າງເປັນປົກກະຕິ;
3. ຄົ້ນຄວ້າພິຈາລະນາ ອອກອະນຸຍາດການນຳໃຊ້ເລກໝາຍໂທລະສັບ ແກ່ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
4. ພັດທະນາ ແລະ ບຳລຸງຮັກສາ ລະບົບການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ສາມາດເຮັດວຽກໄດ້ຢ່າງປົກກະຕິ;
5. ຮັກສາຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ເປັນຄວາມລັບ;
6. ປະສານສົມທົບກັບບັນດາຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດການຂຶ້ນທະບຽນເລກໝາຍໂທລະສັບ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ;
7. ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ແລະ ຂໍ້ຕົກລົງສະບັບນີ້ດ້ວຍຮູບການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ເກັບກູ້ເອົາຊິມຄາດ, ເກັບກູ້ເອົາອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ, ນຳສົ່ງຂໍ້ມູນໃຫ້ພາກສ່ວນກ່ຽວຂ້ອງ ສືບຕໍ່ດຳເນີນຕາມຂະບວນການຍຸຕິທຳ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ການຂຶ້ນທະບຽນເລກໝາຍໂທລະສັບ ຕໍ່ຄະນະນຳກະຊວງເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນປົກກະຕິ;
9. ອອກໃບສັ່ງມອບປັບໃໝບັນດາພຶດຕິກຳທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ຕິດພັນກັບວຽກຂຶ້ນທະບຽນເລກໝາຍໂທລະສັບ;
10. ນຳໃຊ້ເງິນປັບໃໝການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບວຽກງານຂຶ້ນທະບຽນເລກໝາຍໂທລະສັບ ເຂົ້າໃນວຽກງານຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການຂຶ້ນທະບຽນເລກໝາຍໂທລະສັບ ແລະ ວຽກງານອື່ນໆທີ່ຕິດພັນກັບການຄຸ້ມຄອງ ແລະ ດັດສົມໂທລະຄົມມະນາຄົມໃນ ສປປ ລາວ;
11. ພິຈາລະນາອະນຸຍາດໃຫ້ຂຶ້ນທະບຽນເລກໝາຍໂທລະສັບໃນຮູບແບບນິຕິບຸກຄົນ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງ ຄະນະນຳກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ວິໄສທັດ, ຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ການຂຶ້ນທະບຽນເລກໝາຍໂທລະສັບໃນຂັ້ນທ້ອງຖິ່ນຂອງຕົນ;
2. ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈຳໜ່າຍ ແລະ ການຂຶ້ນທະບຽນເລກໝາຍໂທລະສັບຂອງຈຸດບໍລິການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການຂຶ້ນທະບຽນເລກໝາຍໂທລະສັບຕໍ່ອົງການດັດສົມໂທລະຄົມມະນາຄົມ ຢ່າງເປັນປົກກະຕິ;
4. ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ແລະ ຂໍ້ຕົກລົງສະບັບນີ້ ດ້ວຍຮູບການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ເກັບກູ້ເອົາຊິມກາດ, ເກັບກູ້ເອົາອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ, ນຳສົ່ງຂໍ້ມູນໃຫ້ພາກສ່ວນກ່ຽວຂ້ອງ ສືບຕໍ່ດຳເນີນຕາມຂະບວນການຍຸຕິທຳ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ອອກໃບສັ່ງມອບປັບໃໝບັນດານິຕິກຳທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ຕິດພັນກັບວຽກຂຶ້ນທະບຽນເລກໝາຍໂທລະສັບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ນຳໃຊ້ເງິນປັບໃໝການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບວຽກງານຂຶ້ນທະບຽນເລກໝາຍໂທລະສັບເຂົ້າໃນວຽກງານຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການຂຶ້ນທະບຽນເລກໝາຍໂທລະສັບ ແລະ ວຽກງານອື່ນໆ ທີ່ຕິດພັນກັບການຄຸ້ມຄອງ ແລະ ດັດສົມໂທລະຄົມມະນາຄົມ ພາຍໃນແຂວງ, ນະຄອນຫຼວງວຽງຈັນ ຕາມສັດສ່ວນທີ່ໄດ້ຮັບຈັດສັນ ຊຶ່ງກຳນົດໄວ້ໃນນິຕິກຳຕ່າງຫາກ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງ ຄະນະນຳກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຂຶ້ນທະບຽນເລກໝາຍໂທລະສັບ.**

ໃນການຄຸ້ມຄອງການຂຶ້ນທະບຽນເລກໝາຍໂທລະສັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບການຂຶ້ນທະບຽນເລກໝາຍໂທລະສັບ ມີສິດ, ໜ້າທີ່ ໃນການປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 25 ເນື້ອໃນການກວດກາ**

ການກວດກາການຂຶ້ນທະບຽນເລກໝາຍໂທລະສັບ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບເລກໝາຍໂທລະສັບ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບເລກໝາຍໂທລະສັບ;
3. ການເຄື່ອນໄຫວຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບ ແລະ ການດຳເນີນກິດຈະການອື່ນທີ່ປິ່ນອ້ອມ.

ມາດຕາ 26 ຮູບແບບການກວດກາ

ການກວດກາການຂຶ້ນທະບຽນເລກໝາຍໂທລະສັບມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕິດຕາມແບບປົກກະຕິ ຊຶ່ງແມ່ນການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີແຜນການແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍ ທີ່ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ສຳເລັດ, ຖືກຕ້ອງຄົບຖ້ວນ, ຊັດເຈນ ສາມາດກວດສອບໄດ້ ແລະ ການປະຕິບັດຕາມຄຳສັ່ງ, ແຈ້ງການ, ຄຳແນະນຳ ກ່ຽວກັບການການຂຶ້ນທະບຽນເລກໝາຍໂທລະສັບ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍແລະລະບຽບການ.

ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ດັ່ງລາຍລະອຽດລຸ່ມນີ້:

1. ລະເມີດຄັ້ງທີ 01: ຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ ຕາມທີ່ລະບຸໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້;
2. ລະເມີດຄັ້ງທີ 02: ຈະຖືກປັບໃໝ 03 ເທົ່າ ຕາມທີ່ລະບຸໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້. ກໍລະນີ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຫຼື ຈຸດບໍລິການ ເປັນຜູ້ລະເມີດ ແມ່ນຈະປະຕິບັດມາດຕະການ ໂຈະດຳເນີນທຸລະກິດເພີ່ມຕື່ມ ຈົນກວ່າຈະດຳເນີນການປັບປຸງແກ້ໄຂສຳເລັດ, ຖ້າບໍ່ມີການປັບປຸງ ຫຼື ດຳເນີນການປັບປຸງບໍ່ສຳເລັດໃນໄລຍະເວລາ 90 ວັນ ແມ່ນຈະຖືກປະຕິບັດມາດຕະການ ຍົກເລີກໃບອະນຸຍາດດຳເນີນທຸລະກິດ;
3. ລະເມີດຄັ້ງທີ 03: ຈະຖືກປັບໃໝ 05 ເທົ່າ ຕາມທີ່ລະບຸໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້. ກໍລະນີ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຫຼື ຈຸດບໍລິການ ເປັນຜູ້ລະເມີດ ແມ່ນຈະຖືກປະຕິບັດມາດຕະການ ຍົກເລີກໃບອະນຸຍາດດຳເນີນທຸລະກິດ.

ຖ້າຫາກມີການກະທຳຜິດ ທີ່ມີຜົນກະທົບຕໍ່ກັບວຽກງານ ປກຊ-ປກສ ຫຼື ປະມວນກົດໝາຍອາຍາ ແມ່ນຈະມອບໃຫ້ ພາກສ່ວນກ່ຽວຂ້ອງ ດຳເນີນການຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ.

ມາດຕາ 29 ມາດຕະການປັບໃໝ

ຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ສໍາລັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຫຼື ຈຸດບໍລິການ

1.1. ເປີດນໍາໃຊ້ເລກໝາຍໂທລະສັບ ໂດຍບໍ່ໄດ້ຂຶ້ນທະບຽນເລກໝາຍໂທລະສັບຢ່າງຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ບໍ່ສາມາດກວດສອບຂໍ້ມູນໄດ້ ຈະຖືກປັບໃໝ 10.000.000 ກີບ (ສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

1.2. ເປີດໃຫ້ບໍລິການ ໂທເຂົ້າ-ອອກ, ຮັບ-ສົ່ງ ຂໍ້ຄວາມສັ້ນ, ສະແດງເລກໝາຍໂທລະສັບ ແລະ ມີວິທີການໃດໜຶ່ງທີ່ສາມາດກວດເບິ່ງເລກໝາຍໂທລະສັບ ສໍາລັບຊິມກາດນັກທ່ອງທ່ຽວ ຈະຖືກປັບໃໝ 50.000.000 ກີບ (ຫ້າສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

1.3. ນໍາເຂົ້າເລກໝາຍໂທລະສັບຂອງຕ່າງປະເທດ ເພື່ອຈໍາໜ່າຍ ໂດຍທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10.000.000 ກີບ (ສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

1.4. ເປີດເຜີຍຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໂດຍທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 5.000.000 ກີບ (ຫ້າລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

1.5. ມອບ ຫຼື ໂອນ ລະຫັດນໍາໃຊ້ລະບົບຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ບຸກຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 100.000.000 ກີບ(ຮ້ອຍລ້ານກີບ) ຕໍ່ລະຫັດຕໍ່ຄັ້ງ;

1.6. ປັບປຸງ ແລະ ປ່ຽນແປງ ຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 50.000.000 ກີບ (ຫ້າສິບກີບ) ຕໍ່ເລກໝາຍຕໍ່ຄັ້ງ;

1.7. ຈໍາໜ່າຍເລກໝາຍໂທລະສັບທີ່ຂຶ້ນທະບຽນສໍາເລັດແລ້ວ ຈະຖືກປັບໃໝ 50.000.000 ກີບ (ຫ້າສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

1.8. ຈໍາໜ່າຍຊິມກາດ ສໍາລັບນັກທ່ອງທ່ຽວ ນອກດ່ານສາກົນ ຈະຖືກປັບໃໝ 10.000.000 ກີບ (ສິບລ້ານກີບ) ຕໍ່ຊິມກາດຕໍ່ຄັ້ງ.

2. ສໍາລັບຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ

2.1. ນໍາໃຊ້ເລກໝາຍໂທລະສັບ ໂດຍບໍ່ໄດ້ຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ ຈະຖືກປັບໃໝ 10.000.000 ກີບ (ສິບລ້ານກີບ) ຕໍ່ເລກໝາຍ;

2.2. ນໍາໃຊ້ເລກໝາຍໂທລະສັບ ເພື່ອກໍ່ຄວາມວຸ້ນວາຍໃນສັງຄົມ ແລະ ສົ່ງຜົນກະທົບຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຈະຖືກປັບໃໝ 10.000.000 ກີບ (ສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

2.3. ນໍາໃຊ້ເລກໝາຍໂທລະສັບຂອງຕ່າງປະເທດໃນ ສປປ ລາວ, ຍົກເວັ້ນ ຄົນຕ່າງປະເທດ ທີ່ນໍາໃຊ້ເລກໝາຍໂທລະສັບ ທີ່ເປີດນໍາໃຊ້ບໍລິການໂທຂ້າມແດນອັດຕະໂນມັດ (International Roaming) ຈະຖືກປັບໃໝ 10.000.000 ກີບ (ສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

2.4. ມອບ ຫຼື ໂອນ ເລກໝາຍໂທລະສັບຂອງຕົນທີ່ຂຶ້ນທະບຽນເລກໝາຍໂທລະສັບແລ້ວ ໃຫ້ບຸກຄົນອື່ນ ຫຼື ນິຕິບຸກຄົນອື່ນ ໂດຍບໍ່ຂຶ້ນທະບຽນເລກໝາຍໂທລະສັບຄືນໃໝ່ ໃຫ້ຖືກຕ້ອງກັບຂໍ້ມູນຜູ້ນໍາໃຊ້ຕົວຈິງ ຈະຖືກປັບໃໝ 10.000.000 ກີບ (ສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

2.5. ບໍ່ໃຫ້ການຮ່ວມມື ໃນການປະຕິບັດວຽກງານຂຶ້ນທະບຽນເລກໝາຍໂທລະສັບ ຈະຖືກປັບໃໝ 3.000.000 ກີບ (ສາມລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

2.6. ຈໍາໜ່າຍເລກໝາຍໂທລະສັບ ທີ່ຂຶ້ນທະບຽນເລກໝາຍໂທລະສັບສໍາເລັດ ຈະຖືກປັບໃໝ 50.000.000 ກີບ (ຫ້າສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

2.7. ປອມແປງເອກະສານ ຫຼື ຂໍ້ມູນ ເພື່ອມາຂຶ້ນທະບຽນເລກໝາຍໂທລະສັບ ຈະຖືກປັບໃໝ 10.000.000 ກີບ (ສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ;

2.8. ນໍາເຂົ້າເລກໝາຍໂທລະສັບຂອງຕ່າງປະເທດ ເພື່ອຈໍາໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 50.000.000 ກີບ (ຫ້າສິບລ້ານກີບ) ຕໍ່ເລກໝາຍຕໍ່ຄັ້ງ.

ການນໍາໃຊ້ເງິນປັບໃໝຈາກການລະເມີດຂໍ້ຕົກລົງສະບັບນີ້ ແມ່ນປະຕິບັດຕາມນິຕິກໍາສະເພາະ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການຄຸ້ມຄອງໂທລະຄົມມະນາຄົມ ເປັນເຈົ້າການປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ນັບແຕ່ສູນກາງຫາທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍ ການຂຶ້ນທະບຽນເລກໝາຍໂທລະສັບ ເລກທີ 2347/ ກຕສ, ວັນທີ 30 ສິງຫາ 2023.

**ລັດຖະມົນຕີ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ລັດຖະບານແຫ່ງ ສປປ ລາວ

ສັນຕິສຸກ ສິມມາລາວົງ